# ພະນັກງານປັບປຸງຊີວິດການເປັນຢູ່ ຂັ້ນເມືອງ

*ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ*

| | |
|---|---|
| ຊື່ໂຄງການ: | ກອງທຶນຫລຸດຜ່ອນຄວາມທຸກຍາກ, ກິດຈະກຳປັບປຸງຊີວິດການເປັນຢູ່ ແລະ ຄ້ຳປະກັນດ້ານໂພຊະນາການ |
| ຈຳນວນ: | 3 |
| ຊື່ຕຳແໜ່ງ: | ພະນັກງານປັບປຸງຊີວິດການເປັນຢູ່ ຂັ້ນເມືອງ |
| ລາຍງານຫາ: | ປະສານງານ ທລຍ ເມືອງ |
| ຄວາມຮັບຜິດຊອບໂດຍລວມ | ໃຫ້ຄຳແນະນຳ ແລະ ນຳພາປະສານງານຂັ້ນບ້ານ ເພື່ອຮັບປະກັນຜົນສຳເລັດໃນການຈັດຕັ້ງປະຕິບັດຕາມຈຸດປະສົງໂຄງການ ຢູ່ກຸ່ມບ້ານ ແລະບ້ານເປົ້າໝາຍ. |
| ບ່ອນປະຈຳການ: | ຫ້ອງການ ທລຍ ເມືອງ ຊຶ່ງຈຳເປັນຕ້ອງໄປໃຫ້ການຊ່ວຍເຫລືອພະນັກງານຂັ້ນບ້ານ ໃນການຈັດຕັ້ງປະຕິບັດກິດຈະກຳໂຄງການ ທີ່ກ່ຽວຂ້ອງກັບວຽກປັບປຸງຊີວິດການເປັນຢູ່ ຢ່າງເປັນປົກກະຕິ. |
| ໄລຍະເວລາ: | ສັນຍາເປັນປີ ຊຶ່ງລວມມີໄລຍະທົດສອບ 3 ເດືອນ (ພະນັກງານເຂົ້າໃໝ່), ຈະມີການສືບຕໍ່ສັນຍາອີກ ຊຶ່ງຂຶ້ນກັບຜົນການປະເມີນການເຮັດວຽກປະຈຳປີຂອງພະນັກງານ ແລະ ງົບປະມານຂອງໂຄງການ. |

**ຈຸດປະສົງຕົ້ນຕໍຂອງຕຳແໜ່ງ**

ຈຸດປະສົງຕົ້ນຕໍຂອງຕຳແໜ່ງດັ່ງກ່າວ ແມ່ນເພື່ອຮັບປະກັນກິດຈະກຳຂອງໂຄງການໄດ້ຖືກຈັດຕັ້ງປະຕິບັດນັບແຕ່ຢູ່ຂັ້ນເມືອງຫາບ້ານ ໃຫ້ສອດຄ່ອງກັບຄູ່ມືແນະນຳ ແລະ ຄູ່ມືຈັດຕັ້ງປະຕິບັດໂຄງການ, ແລະ ນຳພາ ແລະ ປະສານງານທຸກໆວຽກງານທີ່ກ່ຽວຂ້ອງກັບກິດຈະກຳປັບປຸງຊີວິດການເປັນຢູ່.

**ໜ້າທີ່ຮັບຜິດຊອບ**

- ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດ ຂະບວນການວາງແຜນຢູ່ຂັ້ນບ້ານ ແລະ ກຸ່ມບ້ານ ໂດຍອີງຕາມຄູ່ມືຈັດຕັ້ງປະຕິບັດໂຄງການ ທລຍ, ຄູ່ມືຈັດຕັ້ງປະຕິບັດວຽກປັບປຸງຊີວິການເປັນຢູ່ ແລະ ຄ້ຳປະກັນດ້ານໂພຊະນາການ ແລະ ຄູ່ມືແນະນຳພາກສະໜາມ ເພື່ອຮັບປະກັນຄວາມຕ້ອງການດ້ານປັບປຸງຊີວິດການເປັນຢູ່ໄດ້ຖືກກຳນົດ ແລະ ຈັດລຽງບຸລິມະສິດ ຢູ່ໃນແຜນພັດທະນາບ້ານ ແລະ ກຸ່ມບ້ານ.
- ຮັບປະກັນໃຫ້ກຸ່ມຜູ້ດ້ອຍໂອກາດ (ໂດຍສະເພາະແມ່ຍິງ ແລະ ຊົນເຜົ່າ) ມີສ່ວນຮ່ວມໃນຂະບວນການປຶກສາຫາລື ແລະ ຕັດສິນໃຈ ຢ່າງຫ້າວຫັນ;
- ຊ່ວຍເຫລືອຜູ້ປະສານງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ ໃນການກະກຽມກອງປະຊຸມ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນຂອງສະມາຊິກກຸ່ມຊ່ວຍເຫລືອຊຶ່ງກັນ ແລະ ກັນ ຂອງບ້ານອື່ນໆ;
- ຊີ້ນຳຜູ້ປະສານງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ ກ່ຽວກັບວຽກງານປັບປຸງຊີວິດການເປັນຢູ່ ຊຶ່ງລວມມີການກະກຽມແຜນວຽກປະຈຳເດືອນ, ປະຈຳໄຕມາດ ແລະ ປະຈຳປີ ແລະ ງົບປະມານທີ່ກ່ຽວຂ້ອງ ພ້ອມທັງຮັບປະກັນການຈັດຕັ້ງປະຕິບັດວຽກໃຫ້ໄປຕາມແຜນທີ່ກຳນົດໄວ້.

- ຊີ້ນຳພະນັກງານຂັ້ນບ້ານ ເພື່ອຮັບປະກັນໃນການເກັບກຳຂໍ້ມູນຕິດຕາມ-ປະເມີນຜົນໃນວຽກງານປັບປຸງຊີວິດການເປັນຢູ່, ຂໍ້ມູນມີຄວາມຖືກຕ້ອງ ແລະ ສາມາດລາຍງານໄດ້ຕາມຄວາມຕ້ອງການຂອງໂຄງການ;
- ໂດຍອີງຕາມຄວາມອາດສາມາດຂອງປະສານງານບ້ານ, ຕ້ອງໄດ້ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ 18 ຂັ້ນຕອນ ຕາມຄວາມຮຽກຮ້ອງຕ້ອງການ (ຝຶກອົບຮົມຫົວໜ້າກຸ່ມຊ່ວຍເຫລືອຊຶ່ງກັນ ແລະ ກັນ ແລະ ຫົວໜ້າກຸ່ມທ້ອນເງິນຂັ້ນບ້ານ, ການກວດກາຄວາມພ້ອມຂອງກຸ່ມຊ່ວຍເຫລືອຊຶ່ງກັນ ແລະ ກັນ, ແລະ ອື່ນໆ).
- ຊ່ວຍປະສານງານເມືອງໃນການອະນຸມັດໂຄງການຍ່ອຍ ທີ່ສະເໜີຈາກຄະນະກຳມະການທ້ອນເງິນຂັ້ນບ້ານ;
- ເປັນຫລັກໃນການປະສານງານດ້ານວຽກປັບປຸງຊີວິດການເປັນຢູ່ ລະຫວ່າງປະສານງານບ້ານ ແລະ ກຸ່ມບ້ານ ເພື່ອຮັບປະກັນກິດຈະກຳປັບປຸງຊີວິດການເປັນຢູ່ ໄດ້ເຊື່ອມເຂົ້າກັນກັບໂພຊະນາການ ແລະ ການສະໜອງພື້ນຖານໂຄງລ່າງຕ່າງໆ;
- ຊ່ວຍທີມງານກະຈາຍຂໍ້ມູນຂ່າວສານ-ສຶກສາ-ປະຊາສຳພັນ ໃນການກະກຽມ ແລະ ປັບປຸງເຄື່ອງມືກະຈາຍຂໍ້ມູນຂ່າວສານ ທີ່ກ່ຽວພັນກັບວຽກງານປັບປຸງຊີວິດການເປັນຢູ່ ລວມທັງການກະກຽມຢ່າງໜ້ອຍ 1 ຫົວຂໍ້/ເລື້ອງທີ່ໄດ້ຮັບຜົນສຳເລັດ ຕໍ່ເດືອນ ອີງຕາມການຈັດຕັ້ງປະຕິບັດວຽກປັບປຸງຊີວິດການເປັນຢູ່ທີ່ມີຜົນສຳເລັດຢູ່ພາກສະໜາມ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ປະສານງານບ້ານດ້ານປັບປຸງຊີວິດການເປັນຢູ່ ທາງດ້ານວຽກງານທີ່ກ່ຽວຂ້ອງອື່ນໆ ຊຶ່ງລວມທັງການປຸກລະດົມສັງຄົມ, ການຈັດລຽງບຸລິມະສິດ ແລະ ການວາງແຜນການມີສ່ວນຮ່ວມ, ການປ່ອຍສິນເຊື່ອໃຫ້ແກ່ສະມາຊິກກຸ່ມຊ່ວຍເຫລືອຊຶ່ງກັນ ແລະ ກັນ ໂດຍອີງຕາມແຜນລົງທຶນຂອງຄອບຄົວ, ການຈັດຕັ້ງປະຕິບັດກິດຈະກຳສ້າງລາຍຮັບ, ການເກັບເງິນອີງຕາມກຳນົດ, ການຄິດໄລ່ຜົນກຳໄລຈາກກິດຈະກຳສ້າງລາຍຮັບ ແລະ ການຕິດຕາມ-ປະເມີນຜົນໂຄງການຍ່ອຍ. ການຝຶກອົບຮົມຈະແບ່ງອອກເປັນ 3 ພາກ ເຊັ່ນ: ຝຶກອົບຮົມເຮັດຕົວຈິງ: 1) ກ່ອນການບໍລິການ ແລະ ການນຳໃຊ້, 2) ກຳລັງບໍລິການ ແລະ ນຳໃຊ້, 3) ການຊ່ວຍເຫລືອ ແລະ ການນຳໃຊ້, ເພື່ອຮັບປະກັນໃຫ້ເຂົາເຈົ້າສາມາດປະຕິບັດວຽກຂອງຕົນໃຫ້ຫລ້ອນໜ້າທີ່ .
- ອຳນວຍຄວາມສະດວກໃນການຈັດຕັ້ງການຝຶກອົບຮົມ/ຝຶກອົບຮົມຕົວຈິງກ່ຽວກັບກິດຈະກຳສ້າງລາຍຮັບ ໃຫ້ແກ່ສະມາຊິກກຸ່ມຊ່ວຍເຫລືອຊຶ່ງກັນແລະກັນ ໂດຍການນຳໃຊ້ເຄື່ອງມືປະຈັກຕາທີ່ເໝາະສົມເຊັ່ນ: ຮູບພາບ, ແຜ່ນພັບ, ເລື້ອງ ແລະ ອື່ນໆ ໃນເວລາທີ່ເໝາະສົມສຳລັບປະຊາຊົນ.
- ຊ່ວຍປະສານງານເມືອງ ໃນການປະເມີນກຸ່ມຊ່ວຍເຫລືອຊຶ່ງກັນ ແລະ ກັນ, ປະສານງານບ້ານດ້ານປັບປຸງຊີວິດການເປັນຢູ່ ແລະ ແຜນສ້າງຄວາມເຂັ້ມແຂງທີ່ຕິດພັນ.
- ຄິດໄລ່ ການວິເຄາະຄວາມສ່ຽງ Portfolio AT Risk (PAR) ຂອງກຸ່ມຊ່ວຍເຫລືອຊຶ່ງກັນແລະກັນໃນທຸກໆເຄິ່ງປີ.
- ປັບປຸງລະບົບການຄຸ້ມຄອງຄວາມສ່ຽງທີ່ກ່ຽວຂ້ອງຂອງສະມາຊິກກຸ່ມຊ່ວຍເຫລືອຊຶ່ງກັນແລະກັນ ຊຶ່ງໄດ້ຮັບສິນເຊື່ອໃນການສ້າງກອງທຶນສັງຄົມຢູ່ຂັ້ນເມືອງ.

- ຮັບປະກັນການຈັດຕັ້ງປະຕິບັດວຽກງານປົກປ້ອງທາງສັງຄົມ ແລະ ສິ່ງແວດລ້ອມ ໂດຍອີງຕາມຄູ່ມື ຈັດຕັ້ງປະຕິບັດ.
- ເຂົ້າຮ່ວມກອງປະຊຸມພາຍໃນ ທລຍ ປະຈຳເດືອນ ແລະ ກອງປະຊຸມອື່ນໆ / ຝຶກອົບຮົມ ໂດຍອີງ ຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ປະສານງານເມືອງ.
- ຊ່ວຍເຫລືອໃນການເຊື່ອມສານກັນລະຫວ່າງ ກຸ່ມຊ່ວຍເຫລືອຊຶ່ງກັນແລະກັນ ແລະ ສະຖາບັນການ ເງິນທ້ອງຖິ່ນ.
- ຮັບປະກັນໃຫ້ທຸກໆກິດຈະກຳກ່ຽວກັບວຽກງານປັບປຸງຊີວິດການເປັນຢູ່ ໄດ້ຖືກຈັດຕັ້ງປະຕິບັດດ້ວຍ ຄວາມໂປ່ງໃສ ແລະ ສາມາດກວດສອບໄດ້.
- ຊ່ວຍເຫລືອກຸ່ມຊ່ວຍເຫລືອຊຶ່ງກັນແລະກັນ ໃນການພັດທະນາການເປັນຄູ່ຮ່ວມມືໃນໄລຍະຍາວກັບ ພາກສ່ວນເອກະຊົນ ຫລື ບໍລິສັດ ຢູ່ຂັ້ນທ້ອງຖິ່ນ ເພື່ອຮັບປະກັນທາງດ້ານຕະຫລາດໃຫ້ແກ່ຜະລິດຕະ ພັນປັບປຸງຊີວິດການເປັນຢູ່.
- ອຳນວຍຄວາມສະດວກໃນການກະກຽມແຜນວຽກ ແລະ ຄວາມຄືບໜ້າປະຈຳເດືອນ.
- ປະຕິບັດວຽກອື່ນໆຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ປະສານງານເມືອງ.

**ຄຸນວຸດທິ ແລະ ປະສົບການທີ່ຕ້ອງການ:**

- ຢ່າງໜ້ອຍຈົບຊັ້ນກາງດ້ານກະສິກຳ ແລະ ລ້ຽງສັດ;
- ມີປະສົບການໃນການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ ແລະ ມອບສິດໃຫ້ແມ່ຍິງ, ການເຊື່ອມປົດບາດ ຍິງ-ຊາຍ ແລະ ການສ້າງຕັ້ງກຸ່ມ (ກຸ່ມທ້ອນເງິນ, ກຸ່ມຜະລິດຫັດຖະກຳ, ກຸ່ມສ້າງລາຍຮັບອື່ນໆ);
- ມີປະສົບການໃນການຈັດຕັ້ງປະຕິບັດວຽກໂຄງການ, ການຝຶກອົບຮົມ ແລະ ການສ້າງທີມງານ ລວມ ທັງການປຸກລະດົມຂົນຂວາຍຊຸມຊົນ;
- ມີຄວາມຮູ້ໃນການວາງແຜນໂຄງການ ໂດຍການນຳໃຊ້ວິທີການທີ່ຊຸກຍູ້ໂດຍຊຸມຊົນ CDD approach, ການກຳນົດ ແລະ ຈັດລຽງບຸລິມະສິດໂຄງການ, ແລະ ວິທີການວິເຄາະແບບມີເຫດຜົນ log-frame techniques and analysis;
- ມີປະສົບການ ແລະ ຄວາມຮູ້ດີກ່ຽວກັບການພັດທະນາຂະບວນການການຕະຫລາດ ລວມທັງຕາໜ່າງ ແລະ ການບໍລິການຜະລິດຕະພັນປັບປຸງຊີວິດການເປັນຢູ່;
- ມີຄວາມຮູ້ດ້ານພາສາຊົນເຜົ່າໃດໜຶ່ງ ໃນຕໍ່ໄປນີ້: ມົ້ງ, ຄະມຸ, ມະກ່ອງ, ຕະລຽງ ຍິ່ງເປັນການດີ;
- ມີທັກສະໃນການນຳໃຊ້ຄອມພິວເຕີ້ໃນລະດັບດີ ໂດຍສະເພາະ ເວີດ, ເອັກເຊວ;
- ມີປະສົບການໃນການເຮັດວຽກກັບຊຸມຊົນທີ່ທຸກຍາກ ຢູ່ເຂດຫ່າງໄກສອກຫລີກ;
- ຕຳແໜ່ງດັ່ງກ່າວ ເປີດຮັບສະເພາະຄົນລາວທີ່ມີເງື່ອນໄຂເໝາະສົມ, ແລະ ເປີດກວ້າງໃຫ້ແກ່ຜູ້ສະໝັກ ທີ່ເປັນເພດຍິງ ແລະ ຊົນເຜົ່າ.

# ພະນັກງານໂພຊະນາການ ຂັ້ນເມືອງ

*ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ*

| | |
|---|---|
| ຊື່ໂຄງການ: | ກອງທຶນຫລຸດຜ່ອນຄວາມທຸກຍາກ, ກິດຈະກໍາປັບປຸງຊີວິດການເປັນຢູ່ ແລະ ຄໍ້າປະກັນດ້ານໂພຊະນາການ |
| ຈໍານວນ: | 3 |
| ຊື່ຕໍາແໜ່ງ: | ພະນັກງານໂພຊະນາການ ຂັ້ນເມືອງ<br>ປະສານງານ ທລຍ ເມືອງ |
| ລາຍງານຫາ: | |
| ຄວາມຮັບຜິດຊອບໂດຍລວມ | ໃຫ້ຄໍາແນະນໍາ ແລະ ນໍາພາພະນັກງານຂັ້ນບ້ານ ເພື່ອຮັບປະກັນຜົນສໍາເລັດໃນການຈັດຕັ້ງປະຕິບັດຕາມຈຸດປະສົງໂຄງການ ຢູ່ກຸ່ມບ້ານ ແລະບ້ານເປົ້າໝາຍ. |
| ບ່ອນປະຈໍາການ: | ຫ້ອງການ ທລຍ ເມືອງ ຊຶ່ງຈໍາເປັນຕ້ອງໄປໃຫ້ການຊ່ວຍເຫລືອພະນັກງານຂັ້ນບ້ານ ໃນການຈັດຕັ້ງປະຕິບັດກິດຈະກໍາໂຄງການ ທີ່ກ່ຽວຂ້ອງກັບວຽກປັບປຸງຊີວິດການເປັນຢູ່ ຢ່າງເປັນປົກກະຕິ. |

## ຈຸດປະສົງຫລັກ

ຈຸດປະສົງຫລັກຂອງຕໍາແໜ່ງດັ່ງກ່າວ ແມ່ນເພື່ອຮັບປະກັນກິດຈະກໍາຂອງໂຄງການໄດ້ຖືກຈັດຕັ້ງປະຕິບັດນັບແຕ່ຢູ່ຂັ້ນເມືອງຫາບ້ານ ໃຫ້ສອດຄ່ອງກັບຄູ່ມືແນະນໍາ ແລະ ຄູ່ມືຈັດຕັ້ງປະຕິບັດໂຄງການ, ແລະ ນໍາພາ ແລະ ປະສານງານທຸກໆວຽກງານທີ່ກ່ຽວຂ້ອງກັບກິດຈະກໍາໂພຊະນາການ.

## ໜ້າທີ່ຮັບຜິດຊອບ:

- ອໍານວຍຄວາມສະດວກໃນການຈັດຕັ້ງຜະຕິບັດ ຂະບວນການວາງແຜນຢູ່ຂັ້ນບ້ານແລະ ກຸ່ມບ້ານ ໂດຍອີງຕາມຄູ່ມືຈັດຕັ້ງປະຕິບັດໂຄງການ ທລຍ, ຄູ່ມືຈັດຕັ້ງປະຕິບັດວຽກປັບປຸງຊີວິການເປັນຢູ່ ແລະ ຄໍາປະກັນດ້ານໂພຊະນາການ ແລະ ຄູ່ມືແນະນໍາພາກສະໜາມ ເພື່ອຮັບປະກັນຄວາມຕ້ອງການດ້ານໂພຊະນາການໄດ້ຖືກກໍານົດ ແລະ ຈັດລຽງບຸລິມະສິດ ຢູ່ໃນແຜນພັດທະນາບ້ານ ແລະ ກຸ່ມບ້ານ.
- ຮັບປະກັນໃຫ້ກຸ່ມຜູ້ດ້ອຍໂອກາດ (ໂດຍສະເພາະແມ່ຍິງ ແລະ ຊົນເຜົ່າ) ມີສ່ວນຮ່ວມໃນຂະບວນການປຶກສາຫາລື ແລະ ຕັດສິນໃຈ ຢ່າງຫ້າວຫັນ;

- ນຳພາຜູ້ປະສານງານໂພຊະນາການຂັ້ນບ້ານ ກ່ຽວກັບວຽກງານໂພຊະນາການ ຊຶ່ງລວມມີການກະກຽມແຜນວຽກປະຈຳເດືອນ, ປະຈຳໄຕມາດ ແລະ ປະຈຳປີ ແລະ ງົບປະມານທີ່ກ່ຽວຂ້ອງ ພ້ອມທັງຮັບປະກັນການຈັດຕັ້ງປະຕິບັດວຽກໃຫ້ໄປຕາມແຜນທີ່ກຳນົດໄວ້.
- ນຳພາປະສານງານຂັ້ນບ້ານ ເພື່ອຮັບປະກັນໃນການເກັບກຳຂໍ້ມູນຕິດຕາມ-ປະເມີນຜົນກ່ຽວກັບວຽກງານໂພຊະນາການ, ຂໍ້ມູນມີຄວາມຖືກຕ້ອງ ແລະ ສາມາດລາຍງານໄດ້ຕາມຄວາມຕ້ອງການຂອງໂຄງການ;
- ຈັດຕັ້ງປະຕິບັດ 18 ຂັ້ນຕອນ ກິດຈະໂພຊະນາການ ສຳລັບການສ້າງຕັ້ງ ແລະ ດຳເນີນງານສູນໂພຊະນາການ ຂັ້ນບ້ານໃຫ້ມີຜົນສຳເລັດ
- ຊ່ວຍສູນໂພຊະນາການຂັ້ນບ້ານ ໃນການກະກຽມແຜນການລົງທຶນສູນໂພຊະນາການຂັ້ນບ້ານ ແລະ ສະເໜີຂໍອະນຸມັດ;
- ສ້າງຄວາມເຂັ້ມເຂັ້ມແຂງ/ຝຶກອົບຮົມຕົວຈິງໃຫ້ແກ່ປະສານງານບ້ານ ແລະ ຄະນະກຳມະການຄຸ້ມຄອງສູນໂພຊະນາການ ກ່ຽວກັບຫົວຂໍ້ທີ່ກ່ຽວຂ້ອງ ເຊິ່ງລວມມີ ການລ້ຽງອາຫານ, ສວນຄົວ, ການຄຸ້ມຄອງ ແລະ ດຳເນີນງານຂອງສູນໂພຊະນາການ;
- ໂດຍການປະສານງານກັບພະນັກງານສາທາລະນະສຸກເມືອງ ເພື່ອກະກຽມ MCH ແລະ ການສຶກສາທາງດ້ານໂພຊະນາການແບບມືອາຊີບ, ການເຊື່ອມສານກັນລະຫວ່າງການປັບປຸງຊີຊີວິດການເປັນຢູ່ ແລະ ໂພຊະນາການ ແລະ ການວັດແທກລວງສູງ ແລະ ນ້ຳໜັກໃນແຕ່ລະເດືອນ ຢູ່ທຸກໆບ້ານທີ່ມີສູນໂພຊະນາການ ແລະ ຮັບປະກັນວ່າຜູ້ປະສານງານບ້ານ ໄດ້ບັນທຶກຜົນໄດ້ຮັບຂອງວຽກເຫລົ່ານີ້ລົງໃນປື້ມຕິດຕາມຢ່າງເໝາະສົມ;
- ຮວບຮວມຜົນທີ່ໄດ້ຂອງທຸກໆຊີ້ວັດທາງດ້ານໂພຊະນາການ ຊຶ່ງປະກອບດ້ວຍທຸກຂໍ້ມູນຂອງສູນໂພຊະນາການບ້ານ (ສະມາຊິກສູນໂພຊະນາການ, ຕົ້ນທຶນການລ້ຽງອາຫານ ແລະ ການປະກອບສ່ວນຂອງຊຸມຊົນ, ຂໍ້ມູນການວິເຄາະວັດແທກລວງສູງ ແລະ ນ້ຳໜັກໃນການຂາດແຄນອາຫານ, ສວນຄົວ, ການສຶກສາດ້ານໂພຊະນາການ, MCH ແລະ ອື່ນໆ);
- ຮວບຮວມຂໍ້ມູນດ້ານໂພຊະນາການ ລວມທັງການສຶກສາດ້ານໂພຊະນາການ, ການສຶກສາການເຊື່ອມສານກັນລະຫວ່າງປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ, ຂໍ້ມູນການວິເຄາະການວັດແທກລວງສູງ ແລະ ນ້ຳໜັກຈາກບ້ານທີ່ບໍ່ມີສູນໂພຊະນາການ;
- ເຂົ້າຮ່ວມກອງປະຊຸມພາຍໃນ ທລຍ ປະຈຳເດືອນ ແລະ ກອງປະຊຸມອື່ນໆ / ຝຶກອົບຮົມ ໂດຍອີງຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ປະສານງານເມືອງ.
- ຊ່ວຍເຫລືອໃນການເຊື່ອມສານກັນລະຫວ່າງ ກຸ່ມຊ່ວຍເຫລືອຊຶ່ງກັນແລະກັນ ແລະ ສະຖາບັນການເງິນທ້ອງຖິ່ນ.

- ຮັບປະກັນໃຫ້ທຸກໆກິດຈະກຳກ່ຽວກັບວຽກໂພຊະນາການ ໄດ້ຖືກຈັດຕັ້ງປະຕິບັດດ້ວຍຄວາມໂປ່ງໃສ ແລະ ສາມາດກວດສອບໄດ້.
- ອຳນວຍຄວາມສະດວກໃນການກະກຽມແຜນວຽກ ແລະ ຄວາມຄືບໜ້າປະຈຳເດືອນ.
- ປະຕິບັດວຽກອື່ນໆຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ປະສານງານເມືອງ.

**ຄຸນວຸດທິ ແລະ ປະສົບການທີ່ຕ້ອງການ:**

- ຢ່າງໜ້ອຍຮຽນຈົບຊັ້ນກາງດ້ານສາທາລະນະສຸກ ຫລື ວິທະຍາສາດສັງຄົມ;
- ມີປະສົບການດ້ານໂພຊະນາການ, ການຈັດຕັ້ງປະຕິບັດໂຄງການ, ການຝຶກອົບຮົມ ແລະ ສ້າງທີມງານ ລວມທັງການປຸກລະດົມຂົນຂວາຍຊຸມຊົນ;
- ມີຄວາມຮູ້ໃນການວາງແຜນໂຄງການ ໂດຍການນຳໃຊ້ວິທີການທີ່ຊຸກຍູ້ໂດຍຊຸມຊົນ CDD approach, ການກຳນົດ ແລະ ຈັດລຽງບຸລິມະສິດໂຄງການ, ແລະ ວິທີການວິເຄາະແບບມີເຫດຜົນ log-frame techniques and analysis;
- ມີປະສົບການ ແລະ ຄວາມຮູ້ດີກ່ຽວກັບການພັດທະນາຂະບວນການການຕະຫລາດ ລວມທັງຕາໜ່າງ ແລະ ການບໍລິການຜະລິດຕະພັນປັບປຸງຊີວິດການເປັນຢູ່;
- ມີຄວາມຮູ້ດ້ານພາສາຊົນເຜົ່າໃດໜຶ່ງ ໃນຕໍ່ໄປນີ້: ມົ້ງ, ຄະມຸ, ມະກ່ອງ, ຕະລຽງ ຍິ່ງເປັນການດີ;
- ມີທັກສະໃນການນຳໃຊ້ຄອມພິວເຕີ້ໃນລະດັບດີ ໂດຍສະເພາະ ເວີດ, ເອັກເຊວ;
- ມີປະສົບການໃນການເຮັດວຽກກັບຊຸມຊົນທີ່ທຸກຍາກ ຢູ່ເຂດຫ່າງໄກສອກຫລີກ;
- ຕຳແໜ່ງດັ່ງກ່າວ ເປີດຮັບສະເພາະຄົນລາວທີ່ມີເງື່ອນໄຂເໝາະສົມ, ເປີດກວ້າງໃຫ້ແກ່ຜູ້ສະໝັກທີ່ເປັນເພດຍິງ ແລະ ຊົນເຜົ່າ.

**ປະສານງານ ດ້ານວຽກງານປັບປຸງຊີວິດການເປັນຢູ່ ແລະ ຄໍ້າປະກັນໂພຊະນາການ ຂັ້ນບ້ານ**

ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ

| | |
|---|---|
| ຊື່ໂຄງການ: | ກອງທຶນຫລຸດຜ່ອນຄວາມທຸກຍາກ, ກິດຈະກໍາປັບປຸງຊີວິດການເປັນຢູ່ ແລະ ຄໍ້າປະກັນດ້ານໂພຊະນາການ |
| ຈໍານວນ: | 18 |
| ຊື່ຕໍາແໜ່ງ: | ປະສານງານຂັ້ນບ້ານ (ດ້ານປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ) |
| ລາຍງານຫາ: | ພະນັກງານປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ ຂັ້ນເມືອງ |
| ຄວາມຮັບຜິດຊອບໂດຍລວມ | ໃຫ້ຄໍາແນະນໍາ ແລະ ນໍາພາແກ່ກຸ່ມຊ່ວຍເຫລືອຊຶ່ງກັນ ແລະ ກັນ ແລະ ສູນໂພຊະນາການຂັ້ນບ້ານ ເພື່ອຮັບປະກັນຜົນສໍາເລັດໃນການຈັດຕັ້ງປະຕິບັດຕາມຈຸດປະສົງໂຄງການ ຢູ່ກຸ່ມບ້ານ ແລະບ້ານເປົ້າໝາຍ. |
| ບ່ອນປະຈໍາການ: | ກຸ່ມບ້ານເປົ້າໝາຍ ຊຶ່ງຈໍາເປັນຕ້ອງໄປເຮັດວຽກຢູ່ບ້ານເປົ້າໝາຍຢ່າງເປັນປົກກະຕິອີງຕາມແຜນທີ່ກໍານົດ ເພື່ອຊ່ວຍເຫລືອກຸ່ມຊ່ວຍເຫລືອຊຶ່ງກັນ ແລະ ກັນ ແລະ ສູນໂພຊະນາການ ຂັ້ນບ້ານ ໃນການຈັດຕັ້ງປະຕິບັດກິດຈະກໍາໂຄງການ ທີ່ກ່ຽວຂ້ອງກັບວຽກປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ. |
| ໄລຍະເວລາ: | ສັນຍາເປັນປີ ຊຶ່ງລວມມີໄລຍະທົດສອບ 3 ເດືອນ (ພະນັກງານເຂົ້າໃໝ່), ຈະມີການສືບຕໍ່ສັນຍາອີກ ຊຶ່ງຂຶ້ນກັບຜົນການປະເມີນການເຮັດວຽກປະຈໍາປີຂອງພະນັກງານ ແລະ ງົບປະມານຂອງໂຄງການ. |

**ຈຸດປະສົງຫລັກ**:

ຈຸດປະສົງຫລັກຂອງຕໍາແໜ່ງດັ່ງກ່າວ ແມ່ນເພື່ອຮັບປະກັນກິດຈະກໍາຂອງໂຄງການໄດ້ຖືກຈັດຕັ້ງປະຕິ ບັດນັບແຕ່ຢູ່ຂັ້ນເມືອງຫາບ້ານ ໃຫ້ສອດຄ່ອງກັບຄູ່ມືແນະນໍາ ແລະ ຄູ່ມືຈັດຕັ້ງປະຕິບັດໂຄງການ, ແລະ ນໍາພາ ແລະ ປະສານງານທຸກໆວຽກງານທີ່ກ່ຽວຂ້ອງກັບກິດຈະກໍາປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ.

**ໜ້າທີ່ຮັບຜິດຊອບ**

- **ວຽກງານປັບປຸງຊີວິດການເປັນຢູ່**

- ຊ່ວຍເຫລືອປະສານງານເມືອງ ກ່ຽວກັບຂະບວນການວາງແຜນ ແລະ ຈັດຕັ້ງປະຕິບັດກິດຈະກໍາຢູ່ຂັ້ນບ້ານ ແລະ ກຸ່ມບ້ານ;
- ຈັດຕັ້ງປະຕິບັດ 18 ຂັ້ນຕອນກ່ຽວກັບກິດຈະກໍາປັບປຸງຊີວິດການເປັນຢູ່, ອໍານວຍຄວາມສະດວກໃຫ້ແກ່ຊຸມຊົນໃນການສ້າງຕັ້ງກຸ່ມຊ່ວຍເຫລືອຊຶ່ງກັນແລະກັນ, ກຸ່ມຜະລິດ, ຈັດກອງປະຊຸມຢ່າງເປັນປົກກະຕິ, ກະກຽມກອງປະຊຸມ, ກິດຈະກໍາກຸ່ມທ້ອນເງິນ ແລະ ສິນເຊື່ອເປັນປົກກະຕິ ແລະ ເກັບເງິນຄືນກົງຕາມເວລາ ແລະ ການໝູນວຽນຂອງທຶນສໍາລັບກຸ່ມຊ່ວຍເຫລືອຊຶ່ງກັນແລະກັນ ເພື່ອສ້າງກິດຈະກໍາສ້າງລາຍຮັບ;
- ຊ່ວຍເຫລືອກຸ່ມທ້ອນເງິນ ໃນການກະກຽມແຜນລົງທຶນຄອບຄົວ ແລະ ໂຄງການຍ່ອຍ ແລ້ວສົ່ງຂໍອະນຸມັດຈາກຄະນະກໍາມະການທ້ອນເງິນບ້ານ;
- ປະສານງານກັບປະສານງານກຸ່ມບ້ານ ເພື່ອຮັບປະກັນໃຫ້ກິດຈະກໍາປັບປຸງຊີວິດການເປັນຢູ່ເຊື່ອມສານກັບວຽກໂພຊະນາການ ແລະ ກິດຈະກໍາສະໜອງພື້ນຖານໂຄງລ່າງ;
- ສ້າງຄວາມເຂັ້ມແຂງ/ຝຶກອົບຮົມຕົວຈິງ ໃຫ້ແກ່ກຸ່ມຊ່ວຍເຫລືອຊຶ່ງກັນແລະກັນ ກ່ຽວກັບຫົວຂໍ້ຕ່າງທີ່ກ່ຽວຂ້ອງ ຊຶ່ງລວມມີ: ການບໍລິຫານກອງປະຊຸມ, ການທ້ອນເງິນ, ການປ່ອຍສິນເຊື່ອໃຫ້ສະມາຊິກກຸ່ມຊ່ວຍເຫລືອຊຶ່ງກັນແລະກັນ ໂດຍອີງຕາມແຜນການລົງທຶນຄອບຄົວ, ການກະກຽມໂຄງການຍ່ອຍ, ການຈັດຕັ້ງປະຕິບັດກິດຈະກໍາສ້າງລາຍຮັບ, ການເກັບເງິນຕາມຕາຕະລາງເວລາ, ການຄິດໄລ່ກໍາໄລຈາກກິດຈະກໍາສ້າງລາຍຮັບ ແລະ ການຕິດຕາມ ແລະ ລາຍງານ;
- ເກັບກໍາຂໍ້ມູນດ້ານການຕິດຕາມ ແລະ ປະເມີນຜົນ ໃນໄລຍະເວລາທີ່ກໍານົດໃດໜຶ່ງ ໃຫ້ມີຄວາມຖືກຕ້ອງ ແລະ ລາຍງານຫາຜູ້ປະສານງານເມືອງ ຢູ່ໃນກອງປະຊຸມປະຈໍາເດືອນ;
- ຊ່ວຍຜູ້ປະສານງານເມືອງ ໃນການປະເມີນຜົນການຈັດຕັ້ງປະຕິບັດວຽກຂອງແຕ່ລະກຸ່ມຊ່ວຍເຫລືອຊຶ່ງກັນ ແລະ ກັນ ແລະ ແຜນສ້າງຄວາມເຂັ້ມແຂງທີ່ຕິດພັນ;
- ຄິດໄລ່ການວິເຄາະຄວາມສ່ຽງ Portfolio AT Risk (PAR) ຂອງກຸ່ມຊ່ວຍເຫລືອຊຶ່ງກັນແລະກັນໃນທຸກໆເຄິ່ງປີ ແລະ ການສ້າງກອງທຶນສັງຄົມ ທີ່ໄດ້ຈາກຜົນກໍາໄລສຸດທິຂອງສະມາຊິກກຸ່ມຊ່ວຍເຫລືອຊຶ່ງກັນແລະກັນ ເພື່ອປ້ອງກັນຄວາມສ່ຽງຈາກໄພທໍາມະຊາດ;
- ຮັບປະກັນການຈັດຕັ້ງປະຕິບັດ ວຽກງານປົກປ້ອງທາງສັງຄົມ ແລະ ສິ່ງແວດລ້ອມ ໂດຍອີງຕາມຄູ່ມືຈັດຕັ້ງປະຕິບັດໂຄງການ;
- ເຂົ້າຮ່ວມກອງປະຊຸມພາຍໃນ ທລຍ ປະຈໍາເດືອນ ແລະ ກອງປະຊຸມອື່ນໆ / ຝຶກອົບຮົມ ໂດຍອີງຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ປະສານງານເມືອງ;
- ຊ່ວຍເຫລືອໃນການເຊື່ອມສານກັນລະຫວ່າງ ກຸ່ມຊ່ວຍເຫລືອຊຶ່ງກັນແລະກັນ ແລະ ສະຖາບັນການເງິນທ້ອງຖິ່ນ ແລະ ພັດທະນາການເປັນຄູ່ຮ່ວມມືໃນໄລຍະຍາວກັບພາກສ່ວນເອກະຊົນ ຫລື ບໍລິສັດຢູ່ຂັ້ນທ້ອງຖິ່ນ ເພື່ອຮັບປະກັນທາງດ້ານຕະຫລາດໃຫ້ແກ່ຜະລິດຕະພັນປັບປຸງຊີວິດການເປັນຢູ່;

- ຮັບປະກັນໃຫ້ທຸກໆກິດຈະກຳກ່ຽວກັບວຽກງານປັບປຸງຊີວິດການເປັນຢູ່ ໄດ້ຖືກຈັດຕັ້ງປະຕິບັດດ້ວຍຄວາມໂປ່ງໃສ ແລະ ສາມາດກວດສອບໄດ້;
- ກະກຽມແຜນວຽກ ແລະ ຄວາມຄືບໜ້າປະຈຳເດືອນ.

- **ວຽກງານໂພຊະນາການ**

- ຈັດຕັ້ງປະຕິບັດ 18 ຂັ້ນຕອນຂອງກິດຈະກຳໂພຊະນາການ ເພື່ອການສ້າງຕັ້ງ ແລະ ດຳເນີນສູນໂພຊະນການຂັ້ນບ້ານ ໃຫ້ມີຜົນສຳເລັດ;
- ຊ່ວຍສູນໂພຊະນາການ ໃນການກະກຽມແຜນການລົງທຶນ ແລະ ສະເໜີຂໍອະນຸມັດ;
- ສ້າງຄວາມເຂັ້ມເຂັ້ມແຂງ/ຝຶກອົບຮົມຕົວຈິງໃຫ້ແກ່ຄະນະກຳມະການຄຸ້ມຄອງສູນໂພຊະນາການກ່ຽວກັບຫົວຂໍ້ທີ່ກ່ຽວຂ້ອງ ເຊິ່ງລວມມີ ການລ້ຽງອາຫານ, ສອນຄົວ, ການຄຸ້ມຄອງ ແລະ ດຳເນີນງານຂອງສູນໂພຊະນາການ;
- ໂດຍການປະສານງານກັບພະນັກງານສາທາລະນະສຸກເມືອງ ເພື່ອກະກຽມ MCH ແລະ ການສຶກສາທາງດ້ານໂພຊະນາການແບບມືອາຊີບ, ການເຊື່ອມສານກັນລະຫວ່າງການປັບປຸງຊີຊີວິດການເປັນຢູ່ ແລະ ໂພຊະນາການ ແລະ ການວັດແທກລວງສູງ ແລະ ນ້ຳໜັກໃນແຕ່ລະເດືອນ ຢູ່ທຸກໆບ້ານທີ່ມີສູນໂພຊະນາການ ແລະ ຮັບປະກັນວ່າໄດ້ບັນທຶກຜົນໄດ້ຮັບຂອງວຽກເຫລົ່ານີ້ລົງໃນປື້ມຕິດຕາມຢ່າງເໝາະສົມ;
- ຈັດຕັ້ງການສຶກສາທາງດ້ານໂພຊະນາການບບມືອາຊີບ, ຫົວຂໍ້ການເຊື່ອມສານລະຫວ່າງວຽກງານປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ ແລະ ການວັດແທກລວງສູງ ແລະ ນ້ຳໜັກໃນແຕ່ລະເດືອນ ຢູ່ທຸກໆບ້ານທີ່ບໍ່ມີສູນໂພຊະນາການ ແລະ ຮັບປະກັນວ່າໄດ້ບັນທຶກຜົນໄດ້ຮັບຂອງວຽກເຫລົ່ານີ້ລົງໃນປື້ມຕິດຕາມຢ່າງເໝາະສົມ;
- ເຂົ້າຮ່ວມກອງປະຊຸມພາຍໃນ ທລຍ ປະຈຳເດືອນ ແລະ ກອງປະຊຸມອື່ນໆ / ຝຶກອົບຮົມ ໂດຍອີງຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ປະສານງານເມືອງ;
- ກະກຽມແຜນວຽກ ແລະ ຄວາມຄືບໜ້າປະຈຳເດືອນ.

**ຄຸນວຸດທິທີ່ຕ້ອງການ:**

- ເປັນນັກສຶກສາຈົບໃໝ່;
- ຮຽນຈົບຂັ້ນທາງດ້ານກະສິກຳ ຫລື ລ້ຽງສັດ, ພັດທະນາຊຸມຊົນ, ເສດຖະສາດພັດທະນາ, ວິທະຍາສາດສັງຄົມ, ການສຶກສາດ້ານການພັດທະນາ ຫລືສາຂາອື່ນໆທີ່ກ່ຽວຂ້ອງ (ສຳລັບປະສານງານປັບປຸງຊີວິດການການເປັນຢູ່ຂັ້ນບ້ານ)

- ຮຽນຈົບຊັ້ນກາງດ້ານແພດສາດ ຫລື ພັດທະນາຊຸມຊົນ, ເສດຖະສາດພັດທະນາ, ວິທະຍາສາດສັງຄົມ, ການສຶກສາດ້ານການພັດທະນາສາຂາອື່ນທີ່ກ່ຽວຂ້ອງ (ສໍາລັບປະສານງານໂພຊະນາການຂັ້ນບ້ານ)
- ມີຄວາມຮູ້ກ່ຽວກັບວຽກງານປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ, ມອບສິດໃຫ້ແມ່ຍິງ, ການເຊື່ອມບົດບາດຍິງ-ຊາຍ ແລະ ການສ້າງຕັ້ງກຸ່ມ (ກຸ່ມທ້ອນເງິນ, ກຸ່ມຜະລິດຫັດຖະກໍາ, ກຸ່ມສ້າງລາຍຮັບອື່ນໆ);
- ມີທັກສະການນໍາໃຊ້ຄອມພິວເຕີ້ຂັ້ນພື້ນຖານ (MS Word, Excel,).
- ມີຄວາມສາມາດ ແລະ ເຕັມໃຈໃນການເດີນທາງ ແລະ ພັກຢູ່ຂັ້ນບ້ານ ຢູ່ພາຍໃນເມືອງເປົ້າໝາຍ;
- ມີຄວາມຮູ້ດ້ານພາສາຊົນເຜົ່າໃດໜຶ່ງ ໃນຕໍ່ໄປນີ້: ມົ້ງ, ຄະມຸ, ມະກ່ອງ, ຕະລຽງ ຍິ່ງເປັນການດີ;
- ຕໍາແໜ່ງດັ່ງກ່າວ ເປີດຮັບສະເພາະຄົນລາວທີ່ມີເງື່ອນໄຂເໝາະສົມ, ເປີດກວ້າງໃຫ້ແກ່ຜູ້ສະໝັກທີ່ເປັນເພດຍິງ ແລະ ຊົນເຜົ່າ.